ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງໂຍທາທິການ ແລະ ຂົນສົ່ງ

ເລກທີ 260 /ຍທຂ

ນະຄອນຫຼວງວຽງຈັນ, ວັນທີ 15.05.2022

## ແຈ້ງການ

ເຖິງ: - ທ່ານ ຫົວໜ້າພະແນກໂຍທາທິການ ແລະ ຂົນສົ່ງ ນະຄອນຫຼວງວຽງຈັນ ແລະ ບັນດາແຂວງທົ່ວປະເທດ;

- ບັນດາເຈົ້າໜ້າທີ່ງກ່ຽວຂ້ອງ;
- ຜູ້ປະກອບການຂົນສົ່ງໂດຍສານ ແລະ ສິນຄ້າ.

ເລື່ອງ: ມາດຕະການຜ່ອນຜັນ ການເຂົ້າ-ອອກ ສປປ ລາວ ແລະ ພາຍໃນປະເທດ ສໍາລັບການຂົນສົ່ງໂດຍສານ ແລະ ສິນຄ້າ ໃນໄລຍະມີການລະບາດຂອງພະຍາດໂຄວິດ-19.

- ອີງຕາມ ດໍາລັດ ຂອງ ນາຍົກລັດຖະມົນຕີ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ກະຊວງໂຍທາທິການ ແລະ ຂົນສົ່ງ, ສະບັບເລກທີ 677/ນຍ, ລົງວັນທີ 21 ທັນວາ 2021.
- ອີງຕາມ ດໍາລັດ ວ່າດ້ວຍ ທ່າບົກ ສະບັບເລກທີ 513/ລບ, ລົງວັນທີ 4 ສິງຫາ 2021.
- ອີງຕາມ ແຈ້ງການ ຂອງ ຫ້ອງວ່າການສໍານັກງານນາຍົກລັດຖະມົນຕີ ສະບັບເລກທີ 63/ນຍ, ລົງວັນທີ 17 ມັງກອນ 2022.
- ອີງຕາມ ແຈ້ງການ ຂອງ ຫ້ອງວ່າການສໍານັກງານນາຍົກລັດຖະມົນຕີ ກ່ຽວກັບທິດຊີ້ນໍາມາດຕະການ ໃນການເຂົ້າ-ອອກ ສປປລາວ ແລະ ການຜ່ອນຜັນພາຍໃນປະເທດ ໃນໄລຍະມີການລະບາດຂອງພະຍາດໂຄວິດ-19 ສະບັບເລກທີ 627/ຫສນຍ, ລົງວັນທີ 07 ພຶດສະພາ 2022.

ເພື່ອຜັນຂະຫຍາຍແຈ້ງການຂອງ ຫ້ອງວ່າການສໍານັກງານນາຍົກລັດຖະມົນຕີ ກ່ຽວກັບທິດຊີ້ນໍາມາດຕະການ ໃນການເຂົ້າ-ອອກ ສປປລາວ ແລະ ການຜ່ອນຜັນພາຍໃນປະເທດ ໃນໄລຍະມີການລະບາດຂອງພະຍາດໂຄວິດ-19 ແລະ ເພື່ອເຮັດໃຫ້ວຽກງານການຂົນສົ່ງໂດຍສານ ແລະ ສິນຄ້າ ທຸກຮູບແບບ ດໍາເນີນໄປດ້ວຍຄວາມສະດວກ, ປອດໄພ ແລະ ໂລ່ງລ່ຽນ, ກະຊວງໂຍທາທິການ ແລະ ຂົນສົ່ງ ອອກແຈ້ງການດັ່ງນີ້:

### I. ການຂົນສົ່ງໂດຍສານ ແລະ ສິນຄ້າ ທາງລົດໄຟ

- ອະນຸຍາດໃຫ້ດໍາເນີນການຂົນສົ່ງໂດຍສານ ແລະ ສິນຄ້າທາງລົດໄຟ ພາຍໃນປະເທດໃຫ້ເປັນປົກກະຕິ;
- ອະນຸຍາດໃຫ້ດໍາເນີນການຂົນສົ່ງໂດຍສານ ແລະ ສິນຄ້າທາງລົດໄຟ ລະຫວ່າງປະເທດ ຕາມສັນຍາສອງຝ່າຍ ສປປ ລາວເປັນຄູ່ພາຄີ.
- ສໍາລັບຂາອອກຂອງການຂົນສົ່ງລະຫວ່າງປະເທດ ແລະ ຜ່ານແດນ ໃຫ້ປະຕິບັດຕາມມາດຕະການຂອງປະເທດປາຍທາງ.

### II. ການຂົນສົ່ງໂດຍສານ ແລະ ສິນຄ້າ ທາງອາກາດ

- ອະນຸຍາດໃຫ້ດໍາເນີນການຂົນສົ່ງໂດຍສານ ແລະ ສິນຄ້າ ທາງອາກາດພາຍໃນປະເທດໃຫ້ເປັນປົກກະຕິ;

- ອະນຸຍາດໃຫ້ດຳເນີນການຂົນສົ່ງໂດຍສານ ແລະ ສິນຄ້າ ທາງອາກາດລະຫວ່າງປະເທດ ຕາມສັນຍາສອງຝ່າຍ ແລະ ຫລາຍຝ່າຍ ທີ່ ສປປ ລາວ ເປັນພາຄີ, ສຳລັບຂາອອກແມ່ນ ໃຫ້ປະຕິບັດຕາມມາດຕະການຂອງປະເທດປາຍທາງ.

## III. ການຂົນສົ່ງໂດຍສານ ແລະ ສິນຄ້າ ທາງນ້ຳ

- ອະນຸຍາດໃຫ້ດຳເນີນການຂົນສົ່ງໂດຍສານ, ສິນຄ້າ ແລະ ທ່ອງທ່ຽວທາງນ້ຳ ພາຍໃນປະເທດໃຫ້ເປັນປົກກະຕິ;
- ອະນຸຍາດໃຫ້ດຳເນີນການຂົນສົ່ງໂດຍສານ, ສິນຄ້າ ແລະ ທ່ອງທ່ຽວທາງນ້ຳ ລະຫວ່າງປະເທດ ໃຫ້ສອດຄ່ອງກັບກັບສົນທິສັນຍາ ແລະ ສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ;
- ສຳລັບຂາອອກຂອງການຂົນສົ່ງລະຫວ່າງປະເທດ ແລະ ຜ່ານແດນ ໃຫ້ປະຕິບັດຕາມມາດຕະການຂອງປະເທດປາຍທາງ.

## IV. ການຂົນສົ່ງໂດຍສານ ແລະ ສິນຄ້າທາງບົກ

**1. ການຂົນສົ່ງໂດຍສານທາງບົກ**

- ອະນຸຍາດໃຫ້ດຳເນີນການຂົນສົ່ງໂດຍສານທາງບົກພາຍໃນປະເທດໃຫ້ເປັນປົກກະຕິ;
- ອະນຸຍາດໃຫ້ລົດສ່ວນຕົວ, ລົດໂດຍສານປະຈຳທາງ ແລະ ລົດທ່ອງທ່ຽວລະຫວ່າງປະເທດສາມາດເດີນທາງເຂົ້າ-ອອກ ສປປ ລາວ ໄດ້ ຕາມສັນຍາສອງຝ່າຍ ແລະ ຫລາຍຝ່າຍທີ່ ສປປ ລາວ ເປັນຄູ່ພາຄີ;
- ສຳລັບລົດສ່ວນຕົວ, ລົດໂດຍສານປະຈຳທາງ ແລະ ລົດທ່ອງທ່ຽວຂອງລາວ ທີ່ຈະເດີນທາງອອກນອກປະເທດ ໃຫ້ປະຕິບັດຕາມມາດຕະການຂອງປະເທດປາຍທາງ.

**2. ການຂົນສົ່ງສິນຄ້າພາຍໃນ**

- ອະນຸຍາດໃຫ້ ການຂົນສົ່ງສິນຄ້າພາຍໃນປະເທດແມ່ນສາມາດດຳເນີນໄດ້ຢ່າງເປັນປົກກະຕິ.

**3. ການຂົນສົ່ງສິນຄ້າ ຂາເຂົ້າ, ຂາອອກ, ຜ່ານແດນ ແລະ ນຳເຂົ້າເພື່ອສົ່ງອອກ**

ກ. ສາລັບລົດຂົນສົ່ງສິນຄ້າປະເພດ ອຸປະໂພກ, ບໍລິໂພກ ແລະ ນຳເຂົ້າທົ່ວໄປທີ່ເຂົ້າມາດິນແດນຂອງ ສປປ ລາວ ຕ້ອງນຳສົ່ງສິນຄ້າໄປລົງຢູ່ຈຸດຄ່ຽນຖ່າຍຢູ່ດ່ານຊາຍແດນ, ທ່າບົກ, ສາງພາສີ ຫຼື ຈຸດທີ່ເຈົ້າໜ້າທີ່ກຳນົດ;

ຂ. ສຳລັບລົດຂົນສົ່ງສິນຄ້າປະເພດນ້ຳມັນເຊື້ອໄຟ, ສິນຄ້າທາດແຫຼວ, ອາຍແກັສ, ຢາງປູທາງ, ສິນຄ້າອັນຕະລາຍ, ສິນຄ້າກະສິກຳປະເພດບູດເນົ່າໄວ (ສັດທີ່ມີຊີວິດ, ຊີ້ນແຊ່ແຂງ, ໝາກໄມ້ສົດ ແລະ ອື່ນໆ), ແລະ ສິນຄ້າທີ່ບໍ່ສາມາດຄ່ຽນຖ່າຍ ຫຼື ມີຄວາມສ່ຽງດ້ານຄວາມປອດໄພໃນການຄ່ຽນຖ່າຍ ແມ່ນອະນຸຍາດໃຫ້ລົດຂົນສົ່ງຂອງຕ່າງປະເທດເຂົ້າມາຮອດປາຍທາງໄດ້. ການຂົນສົ່ງສິນຄ້າປະເພດດັ່ງກ່າວ ປະກອບມີ: ການກຳນົດເສັ້ນທາງຂົນສົ່ງ, ຕົ້ນທາງ-ປາຍທາງ ຂົນສົ່ງສິນຄ້າ, ມີໜັງສືຢັ້ງຢືນຂອງສິນຄ້າ ຫຼື ຕົວແທນຢູ່ ສປປ ລາວ ຫຼື ເຈົ້າຂອງໂຄງການ;

ຄ. ລົດຂົນສົ່ງສິນຄ້າຜ່ານດິນແດນຂອງ ສປປ ລາວ ເພື່ອຈະໄປປະເທດທີ່ສາມ ຕ້ອງມາຄ່ຽນຖ່າຍສິນຄ້າໃສ່ລົດຂົນສົ່ງຂອງລາວຢູ່ຈຸດຄ່ຽນຖ່າຍຂາເຂົ້າທີ່ເຈົ້າໜ້າທີ່ກຳນົດ ແລ້ວໃຫ້ລົດຂົນສົ່ງຂອງລາວທີ່ເປັນຄູ່ສັນຍາຂົນສົ່ງຕໍ່ໄປດ່ານຊາຍແດນຂາອອກ;

ງ. ໃນກໍລະນີສິນຄ້າສົ່ງອອກ ຫຼື ຜ່ານແດນ ຫາກມີການບັນຈຸ, ຫຸ້ມຫໍ່ເປັນກໍລະນີພິເສດ, ມີຄວາມສ່ຽງດ້ານຄວາມປອດໄພໃນການຄ່ຽນຖ່າຍ, ເປັນວັດຖຸອັນຕະລາຍ ຊຶ່ງຕ້ອງນຳໃຊ້ລົດຂົນສົ່ງວິຊາສະເພາະ ທີ່ ສປປ ລາວ ບໍ່ມີ ແມ່ນໃຫ້ຂໍອະນຸຍາດເປັນກໍລະນີພິເສດຈາກກົມຂົນສົ່ງ ກະຊວງ ໂຍທາທິການ ແລະ ຂົນສົ່ງ;

ຈ. ການຂົນສົ່ງສິນຄ້າຂາອອກລະຫວ່າງປະເທດ ແລະ ຜ່ານແດນ ແມ່ນໃຫ້ປະຕິບັດຕາມມາດຕະການຂອງປະເທດປາຍທາງ.

ພ້ອມກັນນັ້ນ, ກໍ່ໃຫ້ສືບຕໍ່ປະຕິບັດ ແຈ້ງການ ຂອງ ຫ້ອງການ ກະຊວງໂຍທາທິການ ແລະ ຂົນສົ່ງ ກ່ຽວກັບການເພີ່ມທະວີຄວາມເຂັ້ມງວດ ໃນການຕິດຕາມ, ກວດກາລົດຂົນສົ່ງຕ່າງປະເທດ ທີ່ເຂົ້າມາ ສປປ ລາວ, ສະບັບເລກທີ 04718/ຍທຂ.ຫກ, 23 ກຸມພາ 2022.

**VI. ຄົນຂັບຍານພາຫະນະຂົນສົ່ງ (ເຮືອ, ລົດ, ຍົນ ແລະ ລົດໄຟ), ພະນັກງານ ແລະ ຜູ້ໂດຍສານ ທີ່ເດີນທາງເຂົ້າມາ ສປປ ລາວ**

ການເດີນທາງເຂົ້າມາ ສປປ ລາວ ຂອງ ຄົນຂັບຍານພາຫະນະຂົນສົ່ງ (ເຮືອ, ລົດ, ຍົນ ແລະ ລົດໄຟ), ພະນັກງານ ແລະ ຜູ້ໂດຍສານ ແມ່ນໃຫ້ປະຕິບັດຕາມແຈ້ງການຂອງ ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ກ່ຽວກັບທິດຊີ້ນຳມາດຕະການໃນການເຂົ້າ-ອອກ ສປປລາວ ແລະ ການຜ່ອນຜັນພາຍໃນປະເທດ ໃນໄລຍະມີການລະບາດຂອງພະຍາດໂຄວິດ-19 ສະບັບເລກທີ 627/ຫສນຍ, ລົງວັນທີ 07 ພຶດສະພາ 2022.

**VII. ການຈັດຕັ້ງປະຕິບັດ**

1. ໃຫ້ບັນດາ ພະແນກໂຍທາທິການ ແລະ ຂົນສົ່ງ ນະຄອນຫຼວງວຽງຈັນ/ແຂວງ, ຄະນະດ່ານສາກົນ ແລະ ຜູ້ປະກອບການຂົນສົ່ງ ປະຕິບັດຕາມ ແຈ້ງການ ສະບັບນີ້ ຢ່າງເປັນເອກະພາບທົ່ວປະເທດ;
2. ແຈ້ງການສະບັບນີ້ ປ່ຽນແທນ ແຈ້ງການ ສະບັບເລກທີ 242/ຍທຂ, ລົງວັນທີ 23 ເມສາ 2021 ກ່ຽວກັບການຂົນສົ່ງໂດຍສານ ແລະ ສິນຄ້າ ຢູ່ ສປປ ລາວ ໃນໄລຍະສືບຕໍ່ປ້ອງກັນ, ຄວບຄຸມ ແລະ ແກ້ໄຂການລະບາດຂອງພະຍາດໂຄວິດ-19 ແລະ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ ຈົນກວ່າຈະມີການປ່ຽນແປງ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງບັນດາທ່ານເພື່ອຈັດຕັ້ງປະຕິບັດຢ່າງເຂັ້ມງວດດ້ວຍ.

ຮອງ ແທນ ລັດຖະມົນຕີ

ກະຊວງໂຍທາທິການ ແລະ ຂົນສົ່ງ

ລັດຖະມົນຕີ

ລັນ ແສງອາພອນ